ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ 0307 /ກວຕ

ນະຄອນຫຼວງວຽງຈັນ, ວັນທີ 01 MAR 2018

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍ ການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຂອງຜະລິດຕະພັນ ວັດສະດຸກໍ່ສ້າງ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍມາດຕະຖານ (ສະບັບປັບປຸງ) ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມ ກົດໝາຍ ວ່າດ້ວຍການກໍ່ສ້າງ ສະບັບເລກທີ 05/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017.
- ອີງຕາມ ການຄົ້ນຄ້ວາສະເໜີຂອງ ກົມມາດຕະຖານ ແລະ ວັດແທກ ເລກທີ 0950/ ກວຕ.ກມວ, ລົງວັນທີ 19 ທັນວາ 2017

**ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດ, ປຸງແຕ່ງ , ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ, ບົນພື້ນຖານຄວາມຖືກຕ້ອງຕາມລະບຽບ, ຫຼັກການ, ກົດໝາຍ ແລະ ມາດຕະຖານແຫ່ງຊາດ ຊຶ່ງສອດຄ່ອງກັບລະບຽບການຂອງພາກພື້ນ ແລະ ສາກົນ; ແນໃສ່ຕອບສະໜອງຜະລິດຕະພັນວັດສະດຸກໍ່ສ້າງທີ່ມີຄຸນນະພາບ ໃຫ້ແກ່ວຽກງານກໍ່ສ້າງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2. ຜະລິດຕະພັນວັດສະດຸກໍ່ສ້າງ**

ຜະລິດຕະພັນວັດສະດຸກໍ່ສ້າງ ແມ່ນວັດຖຸສຳເລັດຮູບທີ່ໄດ້ຜ່ານຂະບວນການຜະລິດ, ປຸງແຕ່ງ ເພື່ອນຳໃຊ້ເຂົ້າໃນວຽກງານ ຂອງບັນດາກິດຈະການປຸກສ້າງ, ກໍ່ສ້າງ, ຕິດຕັ້ງ ແລະ ການສ້ອມແປງຕ່າງໆ ທີ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ດຳເນີນທຸລະກິດກ່ຽວກັບຜະລິດຕະພັນວັດສະດຸການກໍ່ສ້າງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ໄດ້ຂຶ້ນທະບຽນຖືກຕ້ອງຕາມກົດໝາຍວິສາຫະກິດ ກ່ຽວກັບທຸລະກິດສະໜອງຜະລິດຕະພັນວັດສະດຸກໍ່ສ້າງ ຢູ່ ສປປ ລາວ;
2. **ຜູ້ຊົມໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ຜະລິດຕະພັນວັດສະດຸກໍ່ສ້າງ ຈາກຜູ້ດຳເນີນທຸລະກິດກ່ຽວກັບຜະລິດຕະພັນວັດສະດຸການກໍ່ສ້າງ;
3. **ເຈົ້າໜ້າທີ່** ໝາຍເຖິງ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງ ຫຼື ຂະແໜງການຂອງລັດທີ່ກ່ຽວຂ້ອງ ໃນການກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ;
4. **ມາດຕະຖານແຫ່ງຊາດລາວ** ຂຽນຫຍໍ້ (ມລ) ໝາຍເຖິງ ມາດຕະຖານທີ່ສະພາມາດຕະຖານແຫ່ງຊາດ ໄດ້ຮັບຮອງເອົາ ແລະ ປະກາດໃຊ້ໂດຍ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
5. **ກາໝາຍມາດຕະຖານ** ໝາຍເຖິງ ກາໝາຍຢັ້ງຢືນຜະລິດຕະພັນ, ລະບົບຄຸ້ມຄອງ ຫຼື ລະບົບຮັບຮອງທີ່ກຳນົດຂຶ້ນໂດຍ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫຼື ອົງການຈັດຕັ້ງອື່ນທີ່ໄດ້ຮັບການມອບໝາຍ;
6. **ຄຸນນະພາບ** ໝາຍເຖິງ ຄຸນລັກສະນະທີ່ຕ້ອງການ ທາງດ້ານຟີຊິກສາດ, ເຄມີສາດ ແລະ ກົນລະສາດຖືກຕ້ອງ ຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
7. **ກາໝາຍຄຸນນະພາບ** ໝາຍເຖິງ ສັນຍາລັກທີ່ຢັ້ງຢືນວ່າໄດ້ຜ່ານການກວດສອບຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ;
8. **ການຢັ້ງຢືນຄຸນນະພາບວັດສະດຸກໍ່ສ້າງ** ໝາຍເຖິງ ການຈັດຕັ້ງປະຕິບັດ ຮັບຮູ້ຢ່າງເປັນທາງການ ແລະ ໄດ້ອອກໃບຢັ້ງຢືນຄຸນນະພາບຈາກອົງການຄຸ້ມຄອງ, ກວດກາ, ກວດສອບ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ;
9. **ໃບຢັ້ງຢືນຄຸນນະພາບ** ໝາຍເຖິງ ເອກະສານທີ່ອອກໃຫ້ໂດຍອົງການຄຸ້ມຄອງຂອງລັດ ທີ່ມີສິດ ອຳນາດ ເພື່ອຢັ້ງຢືນໃຫ້ແກ່ຜະລິດຕະພັນວັດສະດຸກໍ່ສ້າງທີ່ໄດ້ຜ່ານການກວດກາ ຊຶ່ງສອດຄ່ອງກັບລະບຽບການເຕັກນິກ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

ມາດຕາ 4. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຢູ່ ສປປ ລາວ ກ່ຽວກັບຜະລິດຕະພັນວັດສະດຸກໍ່ສ້າງ ທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ປະເພດຜະລິດຕະພັນວັດສະດຸກໍ່ສ້າງ

ມາດຕາ 5. ປະເພດຜະລິດຕະພັນວັດສະດຸກໍ່ສ້າງ

ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ມີຄວາມສຳຄັນຕໍ່ວຽກງານກໍ່ສ້າງ ຈະຕ້ອງໄດ້ມີການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ໄດ້ຈັດແບ່ງເປັນ 10 ປະເພດ ຄື:

1. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ດິນ;
2. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ຫີນ;
3. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ໄມ້;
4. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ໄດ້ມາຈາກ ຊີມັງ;
5. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ແກ້ວ;
6. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ໂລຫະ;
7. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ທາດຕ່າງໆ;
8. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ຢາງ;
9. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ເປັນແຜ່ນ, ແພ;
10. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ເປັນ ສີ.

ມາດຕາ 6. ການກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ

ທຸກໆຜະລິດຕະພັນວັດສະດຸກໍ່ສ້າງທີ່ໄດ້ກຳນົດໃນມາດຕາ 5 ຂ້າງເທິງ ແມ່ນຈະຕ້ອງມີການກວດກາ ແລະ ຢັ້ງຢືນຄຸນນະພາບ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ. ລາຍການບັນຊີຜະລິດຕະພັນວັດສະດຸກໍ່ສ້າງທີ່ມີການຄຸ້ມຄອງ ໄດ້ລະບຸໃນເອກະສານຊ້ອນທ້າຍ.

## ໝວດທີ 3
## ການກວດກາ, ການຢັ້ງຢືນຄຸນນະພາບ, ການເກັບຄ່າທຳນຽມ ແລະ ຄ່າປັບໃໝ

ມາດຕາ 7. ຫຼັກການພື້ນຖານຂອງການກວດກາ ແລະ ຢັ້ງຢືນ ຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ

ຫຼັກການພື້ນຖານ ຂອງການກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ແມ່ນແນໃສ່ເພື່ອ

ຍົກສູງຄຸນນະພາບ ແລະ ປະສິດທິພາບທາງດ້ານເສດຖະກິດ-ສັງຄົມ ກ່ຽວກັບການຄຸ້ມຄອງ, ບໍລິການ ແລະ ປົກປ້ອງຜູ້ຊົມໃຊ້ຜະລິດຕະພັນວັດສະດຸກໍ່ສ້າງ ບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນຄວາມປອດໄພຕໍ່ຊີວິດ,ຊັບສິນ ສະ ພາບແວດລ້ອມ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ;
2. ຮັບປະກັນການເປີດກ້ວາງ, ຄວາມຍຸຕິທຳ, ສະເໝີພາບ ແລະ ໂປ່ງໃສ, ສາມາດກວດສອບໄດ້, ຫຼີກເວັ້ນການຈຳແນກ, ສ້າງອຸປະສັກກີດຂວາງຕໍ່ທຸລະກິດ ກ່ຽວກັບຜະລິດຕະພັນວັດສະດຸກໍ່ສ້າງ;
3. ຮັບປະກັນຄວາມສອດຄ່ອງກັບ ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ; ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານ ໃນການກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ;
4. ຮັບປະກັນໃຫ້ຜູ້ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ, ແລະ ຈຳໜ່າຍ ໃຫ້ເປັນໄປຕາມຫຼັກການ ແລະ ຂັ້ນຕອນການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ;
5. ການດຳເນີນການກວດກາ ທຸກຄັ້ງທີ່ຄະນະກຳມະການລົງກວດກາ ແມ່ນຕ້ອງມີໃບແຈ້ງການ ຫຼື ຂໍ້ຕົກລົງ ທີ່ອອກໃຫ້ໂດຍກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ຕາມການມອບໝາຍ.

**ມາດຕາ 8. ຮູບແບບ ການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ**

ການກວດກາຄຸນນະພາບຂອງ ຜະລິດຕະພັນວັດສະດຸກໍ່ສ້າງ ມີ 03 ຮູບແບບຄື:

1. ກວດກາຄຸນນະພາບ ກ່ອນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນວັດສະດຸ ກໍ່ສ້າງ;
2. ກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຈຳໜ່າຍຕາມທ້ອງຕະຫຼາດ ຕາມແຜນປົກກະຕິແມ່ນ 6 (ຫົກເດືອນ) ຕໍ່ຄັ້ງ;
3. ກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ແບບກະທັນຫັນ (ກໍລະນີສຸກເສີນ) ແມ່ນຈະໄດ້ທຳການກວດກາ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

**ມາດຕາ 9. ເອກະສານຂໍການຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງເພື່ອຂໍການຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ຕ້ອງໄດ້ຍື່ນຄຳຮ້ອງຂໍ ຕໍ່ອົງການຄຸ້ມຄອງທີ່ກ່ຽວຂ້ອງ. ການປະກອບເອກະ ສານເພື່ອຂໍການຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ມີດັ່ງລຸ່ມນີ້:

1. ໃບສະເໜີ ຈາກຜູ້ດຳເນີນທຸລະກິດ;
2. ສຳເນົາເອກະສານ ການປະກອບທຸລະກິດ ຜະລິດຕະພັນວັດສະດຸກໍ່ສ້າງ;
3. ສຳເນົາເອກະສານ ການຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນວັດສະດຸກໍ່ສ້າງ;

4. ໃບຢັ້ງຢືນຄຸນນະພາບຈາກຕົ້ນທາງ ສຳລັບຜະລິດຕະພັນວັດສະດຸກໍ່ສ້າງທີ່ນຳເຂົ້າ (ບໍ່ໃຫ້ເກີນ 6 ເດືອນ ນັບແຕ່ມື້ອອກໃບຢັ້ງຢືນ);

**ມາດຕາ 10. ຂັ້ນຕອນການພິຈາລະນາ ແລະ ອະນຸມັດເອກະສານ**

1. ຮັບຄຳຮ້ອງ ແລະ ອອກໜັງສືຢັ້ງຢືນ ເມື່ອເຫັນວ່າເອກະສານຄົບຖ້ວນຕາມທີ່ລະບຸໄວ້ໃນ ມາດຕາ 9;
2. ເອກະສານເພື່ອ ຂໍການຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ຕ້ອງໄດ້ຮັບການພິຈາລະນາພາຍໃນ (3 ວັນ) ສາມວັນລັດຖະການ;
3. ພາຍຫຼັງເອກະສານຖືກຕ້ອງ, ຄົບຖ້ວນ, ໄດ້ຜ່ານການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນແລ້ວ ຕ້ອງອອກໃບຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ຢ່າງຊ້າບໍ່ໃຫ້ເກີນ (5 ວັນ) ຫ້າວັນລັດຖະການ ຫຼັງຈາກໄດ້ຮັບຜົນການກວດສອບ.

**ມາດຕາ 11. ການອອກໃບຢັ້ງຢືນຄຸນນະພາບ**

ຜະລິດຕະພັນວັດສະດຸກໍ່ສ້າງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຈະຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ຈາກກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາ ສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ຕາມການມອບໝາຍ.

ໃບຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງແມ່ນເອກະສານສຳຄັນທາງດ້ານກົດໝາຍ ແລະ ໄດ້ກຳນົດໃຫ້ນຳໃຊ້ໄດ້ຄັ້ງດຽວເທົ່ານັ້ນ.

**ມາດຕາ 12. ການເກັບຄ່າທຳນຽມການກວດກາ ແລະ ຄ່າປັບໃໝ**

ການກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ຕ້ອງໄດ້ເສຍຄ່າທຳນຽມ, ຄ່າບໍລິການ ແລະ ມາດຕະການປັບໃໝ ດັ່ງນີ້:

1. ຄ່າທຳນຽມໃນການ ກວດກາ, ກວດສອບແມ່ນອີງຕາມ ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານວັດແທກທີ່ປະກາດໃຊ້ໃນແຕ່ລະໄລຍະ.
2. ຄ່າປັບໃໝແມ່ນອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການປັບໃໝ ແລະ ມາດຕະການຕໍ່ຜູ້ລະເມີດກົດໝາຍມາດຕະຖານ ແລະ ກົດໝາຍວັດແທກ.
3. ມອບໃຫ້ກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ ແລະ ນະຄອນ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ໂດຍອີງຕາມດຳລັດວ່າດ້ວຍ ການປັບໃໝ ແລະ ມາດຕະການຕໍ່ຜູ້ລະເມີດກົດໝາຍມາດຕະຖານ ແລະ ກົດໝາຍວັດແທກ.

**ມາດຕາ 13. ສະຫຼາກ ແລະ ເຄື່ອງໝາຍ**

ການຫຸ້ມຫໍ່ ຫຼື ການບັນຈຸ ຜະລິດຕະພັນວັດສະດຸກໍ່ສ້າງແຕ່ລະປະເພດ ຕ້ອງຕິດສະຫຼາກ ແລະ ເຄື່ອງໝາຍໃສ່ດ້ານນອກ ບ່ອນທີ່ເຫັນໄດ້ງ່າຍ ແລະ ຈະແຈ້ງດີ, ເນື້ອໃນຂອງສະຫຼາກຕ້ອງເປັນພາສາລາວ, ສຳລັບພາສາຕ່າງປະເທດ ຕ້ອງມີເນື້ອໃນສອດຄ່ອງກັບພາສາລາວທີ່ໄດ້ກຳນົດໄວ້ ເຊິ່ງມີເນື້ອໃນ ດັ່ງນີ້:

1. ຊື່ຜະລິດຕະພັນ;
2. ປະເພດ ຫຼື ຊະນິດ;
3. ຊຸດຜະລິດ;
4. ກາໝາຍຂອງໂຮງງານທີ່ຜະລິດ;
5. ເຄື່ອງໝາຍການຄ້າ;
6. ຊື່ໂຮງງານ ແລະ ຊື່ປະເທດທີ່ຜະລິດ ແລະ ປຸງແຕ່ງ;
7. ປະລິມານສຸດທິ;
8. ຕ້ອງລະບຸອາຍຸການນຳໃຊ້ ໃນບາງຜະລິດຕະພັນ ( ວັນ, ເດືອນ, ປີ)
9. ກົດລະຫັດສິນຄ້າ (ບາໂຄ້ດ)
10. ຂໍ້ຄວາມ ຫຼື ເຄື່ອງໝາຍທີ່ສະແດງ " ຂໍ້ຄວນລະວັງ ";
11. ກາໝາຍມາດຕະຖານ (ຖ້າໄດ້ຮັບອະນຸຍາດ);
    ວັນທີ, ເດືອນ, ປີ ການກວດກາຄຸນນະພາບ.

**ມາດຕາ 14. ການເກັບມ້ຽນ ແລະ ການສຳເນົາເອກະສານ**

ເອກະສານການກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ປະກອບມີ 03 ຊຸດ:

1. ຊຸດທີ່ໜຶ່ງ, ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງເກັບມ້ຽນ;
2. ຊຸດທີ່ສອງ, ຜູ້ໄດ້ຮັບການກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງເກັບຮັກສາ;
3. ຊຸດທີສາມ, ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນ ຂັ້ນທ້ອງຖິ່ນເກັບສຳເນົາເພື່ອຕິດຕາມ.

## ໝວດທີ 4
## ສິດ, ໜ້າທີ່ ຂອງອົງການຄຸ້ມຄອງ
## ກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ

**ມາດຕາ 15. ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ**

ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງແມ່ນກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໂດຍມອບໃຫ້ ກົມມາດຕະຖານ ແລະ ວັດແທກ, ພະແນກ

ວິທະຍາສາດ ແລະ ເຕັກໂນໂລຊີຂອງ ແຂວງ, ນະຄອນ ຕາມການມອບໝາຍ ຫຼື ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 16. ສິດ ຂອງອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ**

ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ມີສິດ ດັ່ງນີ້:

1. ຄຸ້ມຄອງລະບົບການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ໃຫ້ສອດຄ່ອງຕາມມາດຕະຖານ, ລະບຽບການເຕັກນິກແຫ່ງຊາດ, ຂໍ້ກຳນົດຂອງພາກພື້ນ ແລະ ສາກົນທີ່ກຳນົດໄວ້;
2. ເກັບຕົວຢ່າງຜະລິດຕະພັນວັດສະດຸກໍ່ສ້າງ ເພື່ອນຳສົ່ງໄປກວດສອບຄຸນນະພາບ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ກ່ອນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ;
3. ອອກໃບຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ພາຍຫຼັງໄດ້ຮັບການກວດສອບ ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
4. ພາຍຫຼັງການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ຖ້າເຫັນວ່າບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອເຮັດບົດບັນທຶກ, ຕັກເຕືອນ, ສັ່ງໂຈະຊົ່ວຄາວ ການຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນຜະລິດຕະພັນວັດສະດຸກໍ່ສ້າງ ເພື່ອລາຍງານຂັ້ນເທິງພິຈາລະນາແກ້ໄຂ.
5. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 17. ໜ້າທີ່ ຂອງອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ**

ອົງການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ ມີໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
2. ມີຄວາມຍຸຕິທຳ, ໂປ່ງໃສ, ສະເໝີພາບ ແລະ ບໍລິສຸດ ໃນໜ້າທີ່ຮັບຜິດຊອບ;
3. ກຳນົດເວລາ ໃນການຈັດຕັ້ງປະຕິບັດການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງຢ່າງຈະແຈ້ງ ໃຫ້ແກ່ຜູ້ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ (ນອກຈາກການກວດກຳລະນີສຸກເສີນ);
4. ແນະນຳຜູ້ຜະລິດ, ປຸງແຕ່ງ ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນຜະລິດຕະພັນວັດສະດຸກໍ່ສ້າງ ກ່ຽວກັບຂັ້ນຕອນການແຈ້ງເອກະສານຂໍອະນຸຍາດ ໃນການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ;
5. ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆໃຫ້ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ;

6. ລາຍງານກ່ຽວກັບສະພາບການເຄື່ອນໄຫວ ການກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນເທິງ.
7. ອອກໃບຢັ້ງຢືນຄຸນນະພາບຂອງຜະລິດຕະພັນວັດສະດຸກໍ່ສ້າງທີ່ໄດ້ຜ່ານການກວດກາຖືກຕ້ອງ;
8. ໂຄສະນາ, ເຜີຍແຜ່ ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບແລ້ວ ໃຫ້ແກ່ສັງຄົມຮັບຮູ້ ຜ່ານສື່ໂຄສະນາຕ່າງໆ;
9. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

# ໝວດທີ 5
## ສິດ, ພັນທະຂອງຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ຜະລິດຕະພັນວັດສະດຸກໍ່ສ້າງ

**ມາດຕາ 18. ສິດຂອງຜູ້ດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນວັດສະດຸກໍ່ສ້າງ**

ຜູ້ດຳເນີນທຸລະກິດກ່ຽວກັບ ຜະລິດຕະພັນວັດສະດຸກໍ່ສ້າງ ມີສິດ ດັ່ງນີ້:

1. ບໍລິການ, ໂຄສະນາເຜີຍແຜ່ ຜະລິດຕະພັນວັດສະດຸກໍ່ສ້າງ ພາຍຫຼັງໄດ້ຮັບການກວດກາ ແລະ ຢັ້ງຢືນຄຸນນະພາບ;
2. ປັບປຸງຄຸນນະພາບການຜະລິດ, ການບໍລິການຂອງຕົນ ແລະ ຮ້ອງຂໍຄວາມເປັນທຳຕໍ່ອົງການຄຸ້ມຄອງທີ່ກ່ຽວຂ້ອງ ຫາກເຫັນວ່າການກວດກາ, ກວດສອບ ຜະລິດຕະພັນວັດສະດຸກໍ່ສ້າງນັ້ນບໍ່ໄດ້ຮັບຄວາມເປັນທຳ;
3. ສະເໜີໃຫ້ອົງການຄຸ້ມຄອງທີ່ກ່ຽວຂ້ອງ ລົງກວດກາຄືນ ຖ້າເຫັນວ່າຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງຜິດປົກກະຕິ;
4. ປະຕິບັດສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 19. ສິດຂອງຜູ້ຊົມໃຊ້ ຜະລິດຕະພັນວັດສະດຸກໍ່ສ້າງ**

ຜູ້ຊົມໃຊ້ມີສິດ ດັ່ງນີ້:

1. ເລືອກໃຊ້ຜະລິດຕະພັນ ແລະ ການບໍລິການ ກ່ຽວກັບຜະລິດຕະພັນວັດສະດຸກໍ່ສ້າງ ຕາມຄວາມຕ້ອງການ;
2. ຮ້ອງຮຽນຕໍ່ພາກສ່ວນທີ່ກ່ຽວຂ້ອງເມື່ອເຫັນວ່າ ການນຳໃຊ້ຜະລິດຕະພັນ ແລະ ການບໍລິການບໍ່ໄດ້ຮັບຄວາມເປັນທຳ;
3. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າຜູ້ດຳເນີນທຸລະກິດຜະລິດຕະພັນວັດສະດຸກໍ່ສ້າງສ້າງຜົນກະທົບຕໍ່ສະພາບແວດລ້ອມ ແລະ ສັງຄົມ;
4. ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບ ຄຸນນະພາບ ແລະ ການບໍລິການຜະລິດຕະພັນວັດສະດຸກໍ່ສ້າງ;
5. ແຈ້ງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການລະເມີດມາດຕະຖານ ແລະ ລະບຽບການເຕັກນິກຂອງຜະລິດຕະພັນວັດສະດຸກໍ່ສ້າງ;

6. ປະຕິບັດສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 20. ພັນທະຜູ້ດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນວັດສະດຸກໍ່ສ້າງ**

ຜູ້ດຳເນີນທຸລະກິດ ມີພັນທະ ດັ່ງນີ້:

1. ກ່ອນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດ ແລະ ປຸງແຕ່ງ ຢູ່ພາຍໃນປະເທດ ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນຄຸນນະພາບຈາກອົງການທີ່ກ່ຽວຂ້ອງ;
2. ຮັບຜິດຊອບທຸກຜົນເສຍຫາຍທີ່ເກີດຂຶ້ນ ຍ້ອນຜະລິດຕະພັນວັດສະດຸກໍ່ສ້າງ ຕາມທີ່ໄດ້ກຳນົດໄວ້ໃນບັນຊີຄຸ້ມຄອງຜະລິດຕະພັນວັດສະດຸກໍ່ສ້າງ ທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ໄດ້ຮັບການຢັ້ງຢືນຄຸນນະພາບ ຈາກພາກສ່ວນທີ່ກ່ຽວຂ້ອງຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້;
3. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ພະນັກງານທີ່ກ່ຽວຂ້ອງ ໃນການລົງກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງໃນແຕ່ລະຄັ້ງ;
4. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 21. ພັນທະຂອງຜູ້ຊົມໃຊ້ ຜະລິດຕະພັນວັດສະດຸກໍ່ສ້າງ**

ຜູ້ຊົມໃຊ້ຜະລິດຕະພັນວັດສະດຸກໍ່ສ້າງ ມີພັນທະ ດັ່ງນີ້:

1. ນຳໃຊ້ຜະລິດຕະພັນວັດສະກໍ່ສ້າງ ທີ່ໄດ້ຮັບການຢັ້ງຢືນຄຸນນະພາບຈາກພາກສ່ວນທີ່ກ່ຽວຂ້ອງ;
2. ນຳໃຊ້ຜະລິດຕະພັນ ແລະ ການບໍລິການ ໂດຍປະຕິບັດຕາມຄຳແນະນຳຂອງຜູ້ໃຫ້ການບໍລິການ;
3.ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 22. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ ກ່ຽວກັບຜະລິດຕະພັນວັດສະດຸກໍ່ສ້າງ ທີ່ນອນຢູ່ໃນລາຍການບັນຊີຜະລິດຕະພັນວັດສະດຸກໍ່ສ້າງທີ່ມີການຄຸ້ມຄອງ ທີ່ບໍ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບຈາກ ກົມມາດຕະຖານ ແລະ ວັດແທກ, ແຂວງ, ນະຄອນ ຕາມການມອບໝາຍ ຫຼື ຕາມການແບ່ງຂັ້ນຄຸ້ມຄອງ;
2. ໂຄສະນາເຜີຍແຜ່ ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
3. ຂັດຂວາງການປະຕິບັດງານຂອງເຈົ້າໜ້າທີ່ ທີ່ລົງກວດກາ, ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ;
4. ປອມແປງເອກະສານ ແລະ ໃບຢັ້ງຢືນຕ່າງໆທີ່ກ່ຽວຂ້ອງ ຂອງຜະລິດຕະພັນວັດສະດຸກໍ່ສ້າງ.

**ມາດຕາ 23. ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ**

ຫ້າມສໍາລັບເຈົ້າໜ້າທີ່ ທີ່ປະຕິບັດໜ້າທີ່ຮັບຜິດຊອບວຽກງານ ກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ມີພຶດຕິກໍາ ດັ່ງນີ້:

1. ຜູ້ທີ່ບໍ່ໄດ້ຮັບການແຕ່ງຕັ້ງ ລົງປະຕິບັດໜ້າທີ່ກວດກາຄຸນນະພາບ ຜະລິດຕະພັນວັດສະດຸກໍ່ສ້າງ;
2. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຮັບຜິດຊອບ;
3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທໍາ, ລໍາອຽງຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ຮັບສິນບົນ ແລະ ສວຍໃຊ້ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;
5. ປອມແປງ, ແກ່ຍາວເວລາ ແລະ ຖ່ວງດຶງເອກະສານການຢັ້ງຢືນຄຸນນະພາບ.
6. ມີພຶດຕິກໍາອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

**ມາດຕາ 24. ຂໍ້ຫ້າມສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ.**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ການເຄື່ອນໄຫວ ວຽກງານການກວດກາຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ເພື່ອສ້າງອຸປະສັກກີດຂວາງ ແລະ ແຊກແຊງການເຮັດວຽກຂອງເຈົ້າໜ້າທີ່ ທີ່ຮັບຜິດຊອບການກວດ ກາ, ກວດສອບ ຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ;
2. ໂຄສະນາ, ສົ່ງເສີມຜະລິດຕະພັນວັດສະດຸກໍ່ສ້າງ ທີ່ບໍ່ໄດ້ຄຸນນະພາບ;
3. ສ້າງມົນລະພິດຕໍ່ສະພາບແວດລ້ອມ ແລະ ສັງຄົມ;
4. ຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດຂໍ້ຕົກລົງສະບັບນີ້;
5. ປິດບັງ, ເຊື່ອງອໍາການກະທໍາທີ່ເປັນການລະເມີດລະບຽບກົດໝາຍ;
6. ມີພຶດຕິກໍາອື່ນທີ່ຜິດກັບລະບຽບກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຮ່ວມມື, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ທີ່ກ່ຽວຂ້ອງກັບການຄຸ້ມຄອງຄຸນນະພາບຜະລິດຕະພັນວັດສະດຸກໍ່ສ້າງ ຫຼື ຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບການປະຕິບັດນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 26. ມາດຕະການຕໍ່ເຈົ້າໜ້າທີ່ ທີ່ກະທໍາຜິດຕໍ່ໜ້າທີ່ຮັບຜິດຊອບ**

ເຈົ້າໜ້າທີ່ ທີ່ກົດໜ່ວງ ຫຼື ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດວິໃນເຊັ່ນ: ສຶກສາອົບຮົມ, ຍົກຍ້າຍໜ້າທີ່, ປົດຕໍາແໜ່ງ ຫຼື ໄລ່ອອກຈາກລັດຖະກອນ, ນອກຈາກນີ້ ຍັງຈະໄດ້ປະຕິບັດ

ມາດຕະການຕ່າງໆທີ່ໄດ້ລະບຸໃນໝວດທີ 8 ຂອງກົດໝາຍອາຍາ ຕາມແຕ່ລະກໍລະນີ ແລະ ຕາມລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 27. ມາດຕະການຕໍ່ຜູ້ລະເມີດອື່ນໆ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ, ໃຊ້ແທນທາງແພ່ງ ຫຼື ດໍາເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

# ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 28. ການຈັດຕັ້ງປະຕິບັດ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມອບໃຫ້ກົມມາດຕະຖານ ແລະ ວັດແທກ ສົມທົບກັບຂະແໜງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ.

**ມາດຕາ 29. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ທຸກລະບຽບການທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**
**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**

ບໍ່ວຽງຄໍາ ວົງດາລາ

---

## ບັນຊີລາຍຊື່ ຜະລິດຕະພັນວັດສະດຸກໍ່ສ້າງ

ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ມີຄວາມສຳຄັນຕໍ່ວຽກງານກໍ່ສ້າງ ຈະຕ້ອງໄດ້ມີການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ໄດ້ຈັດແບ່ງເປັນ 10 ປະເພດ ຄື:

**ປະເພດ I. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ດິນ, ມີ:**

1. ດິນຈີ່;
2. ດິນຂໍ;
3. ດິນຕິດຝາ, ດິນປູພື້ນເຮືອນ ແລະ ອາຄານ (ກະໂລ);
4. ເຄື່ອງສຸກຂະພັນທີ່ໄດ້ມາຈາກ ການຜະລິດ, ປຸງແຕ່ງ, ປະກອບ ທັງໝົດ ຫຼື ບາງສ່ວນ ຈາກດິນ;

**ປະເພດ II. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ຫີນ, ມີ:**

1. ແຜ່ນຫີນທີ່ໃຊ້ຕິດຝາ, ຫີນປູພື້ນເຮືອນ ແລະ ປູພື້ນອາຄານ;
2. ຫີນປູພື້ນເດີ່ນ;
3. ຫີນກຣານິດ
4. ຜະລິດຕະພັນຈາກຫີນອ່ອນ;

**ປະເພດ III. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ໄມ້, ມີ:**

1. ໄມ້ຕີແບບ;
2. ໄມ້ວົງກົບ;
3. ໄມ້ອັດ;
4. ໄມ້ປາກເກ;
5. ໄມ້ປູພື້ນ;
6. ໄມ້ສຳເລັດຮູບທຸກປະເພດ;
7. ໄມ້ໝອນທາງລົດໄຟ

**ປະເພດ IV. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ຊີມັງ, ມີ:**

1. ຊີມັງ
2. ເສົາໄຟຟ້າ;
3. ເສົາເຂັມ;
4. ທໍ່ເບຕົງ;
5. ດິນບລ໋ອກ, ລູກໝອນ;
6. ຢາແນວ;

7. ຊີມັງກາວ;

8. ຜົງກັນຊຶມ;

ປະເພດ V. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ແກ້ວ, ມີ:

1. ແກ້ວໃຊ້ສຳຫຼັບເຮັດຝາ;
2. ແກ້ວໃຊ້ສຳຫຼັບໃຫ້ແສງສະຫວ່າງຜ່ານ;
3. ແກ້ວໃຊ້ສຳຫຼັບມຸງຫຼັງຄາ;
4. ແວ່ນ;

ປະເພດ VI. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ໂລຫະ, ມີ:

1. ເຫຼັກເສັ້ນກົມ;
2. ເຫຼັກເສັ້ນປ້ອງອ້ອຍ;
3. ເຫຼັກຕະປູ;
4. ເຫຼັກ, ໂລຫະ ຫຼື ໂລຫະປະສົມ ຮູບປະພັນຊະນິດຕ່າງໆທີ່ໃຊ້ໃນການກໍ່ສ້າງ ແລະ ສ້ອມແປງ;
5. ທໍ່ລວດ, ຕາໜ່າງທໍ່ລວດ, ສາຍກາບ;
6. ສາຍໄຟຟ້າ;
7. ລາງລົດໄຟ;
8. ເຫຼັກ, ໂລຫະ ຫຼື ໂລຫະປະສົມ ທີ່ເປັນຜະລິດຕະພັນສຳເລັດຮູບຊະນິດຕ່າງໆທີ່ໃຊ້ສຳຫຼັບປະກອບ, ຢຶດຕິດໃນການກໍ່ສ້າງ ແລະ ສ້ອມແປງ;
9. ແຜ່ນສັງກະສີ;
10. ແຜ່ນອາລູຊີງ;
11. ແຜ່ນຄອມໂພຊິດ;
12. ແຜ່ນອາລູມີນຽມ.

ປະເພດ VII. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ທາດຕ່າງໆ, ມີ:

1. ຂີ້ເທົ່າລອຍ;
2. ນ້ຳຢາເສີມເບຕົງ;
3. ນ້ຳຢາກັນຊຶມ;
4. ສານກັນຜະນຶກນ້ຳ;
5. ກາວ.

ປະເພດ VIII. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ຜະລິດມາຈາກ ຢາງ, ມີ:

1. ຢາງປູທາງ
2. ຢາງກັນຊຶມ;
3. ຢາງໃຊ້ສຳຫຼັບປູພື້ນ;
4. ຢາງໃຊ້ສຳຫຼັບເຮັດຝາ;

5. ຢາງໃຊ້ສຳຫຼັບມຸງ;
6. ຜະລິດຕະພັນຕ່າງໆເປັນສິ້ນສ່ວນ ຫຼື ປະກອບທີ່ໃຊ້ໃນການກໍ່ສ້າງລ້ອມແປງ;
7. ທໍ່ PVC ພ້ອມອຸປະກອນຕິດຕັ້ງ;
8. ທໍ່ UPVC ພ້ອມອຸປະກອນຕິດຕັ້ງ;
9. ເຄື່ອງສຸກຂະພັນທີ່ເຮັດດ້ວຍຢາງ

**ປະເພດ IX. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ເປັນແຜ່ນ, ແພ, ມີ:**

1. ແຜ່ນກັນຮ້ອນ;
2. ແຜ່ນກັນສຽງ;
3. ແຜ່ນໄຍສັງເຄາະ (ແພກັນຊຶມ);
4. ໄຍສັງເຄາະ;
5. ແຜ່ນໄຍເສີມແຮງ;
6. ແຜ່ນຢາງກັນຊຶມ.

**ປະເພດ X. ຜະລິດຕະພັນວັດສະດຸກໍ່ສ້າງ ທີ່ເປັນ ສີ, ມີ:**

1. ສີກັນໝ້ຽງ;
2. ສີນ້ຳ;
3. ສີນ້ຳມັນ;
4. ສີເທີໂມປລາສະຕິກ;